# ກົດລະບຽບ

# ແນວລາວສ້າງຊາດ

# ສະໄໝທີ X

## ສາລະບານ

ໜ້າ


ພາກເປີດຫົວເລື່ອງ.........................................................................3

ໝວດທີ I ວ່າດ້ວຍແນວລາວສ້າງຊາດ..........................................................4-8

ໝວດທີ II ພາຄີຂອງແນວລາວສ້າງຊາດ.........................................................8-9

ໝວດທີ III ຄະນະກຳມະການສູນກາງແນວລາວສ້າງຊາດ...............................9-12

ໝວດທີ IV ຄະນະກຳມະການແນວລາວສ້າງຊາດ ຂັ້ນທ້ອງຖິ່ນ........................12-16

ໝວດທີ V ແບບແຜນວິທີເຮັດວຽກຂອງແນວລາວສ້າງຊາດ...........................16-17

ໝວດທີ VI ວຽກງານຕິດຕາມ-ກວດກາແນວລາວສ້າງຊາດ.............................17-18

ໝວດທີ VII ການຍ້ອງຍໍສັນລະເສີນ ແລະ ການປະຕິບັດວິໄນ...............................18

ໝວດທີ VIII ການເງິນ ແລະ ຊັບສິນບັດ ຂອງແນວລາວສ້າງຊາດ......................18-19

ໝວດທີ IX ກາປະທັບ, ກາໝາຍ ແລະ ທຸງ ຂອງແນວລາວສ້າງຊາດ................19-20

ໝວດທີ X ບົດບັດຍັດສຸດທ້າຍ..................................................................20-21

# ກົດລະບຽບ
# ຂອງແນວລາວສ້າງຊາດ ສະໄໝທີ X

---------------------------------

ຜ່ານຫຼາຍໄລຍະແຫ່ງການເຄື່ອນໄຫວ, ອົງການແນວລາວສ້າງຊາດໄດ້ເສີມຂະຫຍາຍນໍ້າໃຈຮັກຊາດ, ມູນເຊື້ອສາມັກຄີທົ່ວປວງຊົນລາວທັງຊາດ ທີ່ເປັນປັດໄຈຕັດສິນໄຊຊະນະ ຂອງພາລະກິດຕໍ່ສູ້ປົດປ່ອຍຊາດ, ຍາດເອົາເອກະລາດເປັນອັນໜຶ່ງອັນດຽວ ກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ແນວລາວສ້າງຊາດໄດ້ສືບທອດ ແລະ ເສີມຂະ ຫຍາຍມູນເຊື້ອອັນມີກຽດສະຫງ່າ ຂອງແນວລາວອິດສະຫຼະ, ແນວລາວຮັກຊາດໃນເມື່ອກ່ອນ ຊຶ່ງໄດ້ເຕົ້າໂຮມຄວາມສາມັກຄີ ປະຊາຊົນລາວບັນດາເຜົ່າເຂົ້າຮ່ວມໃນການຕໍ່ສູ້ກູ້ຊາດ ແລະ ປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມທິດສັງຄົມນິຍົມ ທີ່ພັກປະຊາຊົນປະຕິວັດລາວກຳນົດໄວ້.

ແນວລາວສ້າງຊາດໄດ້ເສີມຂະຫຍາຍມູນເຊື້ອຮັກຊາດ ແລະ ຮັກລະບອບໃໝ່ ໂດຍການສ້າງຄວາມເອກອ້າງທະນົງໃຈຕໍ່ຊາດ, ສ້າງຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ສາມັກຄີກັບຄົນເຊື້ອສາຍລາວທີ່ມີນໍ້າໃຈຮັກຊາດຢູ່ຕ່າງປະເທດ ແລະ ຊາວຕ່າງດ້າວຢູ່ລາວ ຊຶ່ງເຫັນດີເຫັນພ້ອມນຳພາລະກິດປ່ຽນແປງໃໝ່ ຂອງພັກ ແນໃສ່ຮັກສາເອກະລາດ ເອກະພາບ ອຳນາດອະທິປະໄຕ ຂອງຊາດ ແລະ ຜືນແຜ່ນດິນອັນຄົບຖ້ວນ; ດຳເນີນພາລະກິດຫັນປະເທດຊາດ ໃຫ້ເປັນອຸດສາຫະກຳ ແລະ ທັນສະໄໝ ເພື່ອເຮັດໃຫ້ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິ ໄລ.

ອົງການແນວລາວສ້າງຊາດ ແມ່ນພາກສ່ວນໜຶ່ງໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ ໂດຍແມ່ນພັກປະຊາຊົນ ປະຕິວັດລາວເປັນແກນນຳ, ແມ່ນພື້ນຖານການເມືອງ ຂອງອຳນາດລັດປະຊາທິປະໄຕ ປະຊາຊົນລາວ, ເປັນບ່ອນເຕົ້າໂຮມກ້ອນກຳລັງມະຫາສາມັກຄີທົ່ວປວງຊົນລາວທັງຊາດ ໃຫ້ເສີມຂະຫຍາຍສິດເປັນເຈົ້າປະເທດຊາດ, ເປັນບ່ອນປຶກສາຫາລືຢ່າງມີປະຊາທິປະໄຕ, ປະສານສົມທົບ ແລະ ເປັນເອກະພາບໃນການກະທຳ ຂອງບັນດາພາຄີ ແລະ ແນວລາວສ້າງຊາດ.

# ໝວດທີ I
# ວ່າດ້ວຍ ແນວລາວສ້າງຊາດ

**ມາດຕາ 1. ນິຍາມ:** ແນວລາວສ້າງຊາດ ແມ່ນອົງການຈັດຕັ້ງສຳພັນທາງດ້ານການເມືອງ ຂອງທົ່ວສັງຄົມ, ເປັນສະຫະພັນສະໝັກໃຈທີ່ສ້າງຕັ້ງຂຶ້ນບົນພື້ນຖານຄວາມຕື່ນຕົວ ຂອງອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນໃຫ້ແກ່ຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ-ໄວ ລວມທັງຕົວແທນຄົນລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ໂດຍແມ່ນພັກປະຊາຊົນ ປະຕິວັດລາວເປັນແກນນຳ.

**ມາດຕາ 2. ໜ້າທີ່ ຂອງແນວລາວສ້າງຊາດ.**

1. ໜ້າທີ່ລວມ:

- ເຕົ້າໂຮມຄວາມສາມັກຄີປະຊາຊົນທຸກຊົນເຜົ່າ, ຊັ້ນຄົນ, ສາສະໜາ, ເພດ-ໄວ ບົນພື້ນຖານແນວທາງນະໂຍບາຍ ຂອງພັກ ແລະ ລະບຽບກົດໝາຍ ຂອງລັດ.
- ປຸກລະດົມທຸກກຳລັງທົ່ວສັງຄົມປະຕິບັດແນວທາງນະໂຍບາຍ ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານໃຫ້ປະກົດຜົນເປັນຈິງ.
- ລົງຮາກຖານພົບປະກັບປະຊາຊົນ, ສຶກສາອົບຮົມປະຊາຊົນ, ໄກ່ເກ່ຍປະຊາຊົນບັນດາເຜົ່າໃຫ້ມີຄວາມສາມັກຄີປອງດອງຢ່າງໜັກແໜ້ນ.
- ປະກອບສ່ວນສ້າງພັກໃຫ້ປອດໃສ, ໜັກແໜ້ນ, ເຂັ້ມແຂງ ແລະ ສ້າງລັດທີ່ປົກຄອງດ້ວຍກົດໝາຍ, ເປັນລັດ ຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ; ຕິດຕາມ-ກວດກາການເຄື່ອນໄຫວ ຂອງສະພາແຫ່ງຊາດ, ສະພາທ້ອງຖິ່ນ ແລະ ອົງການປົກຄອງທຸກຂັ້ນ.
- ປະສານສົມທົບກັບພາຄີ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານ ເພື່ອສັງຄົມ ແລະ ປະຊາຊົນລາວບັນດາເຜົ່າ.
- ປະກອບສ່ວນວຽກງານການທູດປະຊາຊົນ ຕາມແນວທາງການຕ່າງປະເທດ ຂອງພັກ.

2. ໜ້າທີ່ສະເພາະ.

- ສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າ ໃຫ້ເຄື່ອນໄຫວຖືກຕ້ອງຕາມແນວທາງ ຂອງພັກ ແລະ ກົດໝາຍ ຂອງລັດ.
- ສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີບັນດາສາສະໜາ ແລະ ສາສະນິກະຊົນ.
- ສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີບັນດາຊັ້ນຄົນ, ຜູ້ຊົງຄຸນວຸດທິ, ປັນຍາຊົນ, ນັກທຸລະກິດ ແລະ ອົງການຈັດຕັ້ງສັງຄົມໃຫ້ເຄື່ອນໄຫວຖືກຕ້ອງຕາມແນວທາງ ຂອງພັກ ແລະ ລະບຽບກົດໝາຍ ຂອງລັດ.

- ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງຕົນໃຫ້ມີຄຸນນະພາບສູງ ເພື່ອເຮັດສຳເລັດໜ້າທີ່ການເມືອງທີ່ພັກ, ລັດ ແລະ ປະຊາຊົນມອບໝາຍໃຫ້.

- ຕັ້ງໜ້າເຮັດວຽກງານການເມືອງ-ແນວຄິດໃຫ້ຖັນແຖວພະນັກງານ ຂອງຕົນ.

- ຕິດຕາມ-ກວດກາ ເພື່ອແກ້ໄຂທາງສຽງສັງຄົມ ແລະ ສະເໜີພາກສ່ວນກ່ຽວຂ້ອງແກ້ໄຂຢ່າງທັນການ.

**ມາດຕາ 3. ສິດ ຂອງແນວລາວສ້າງຊາດ.**

- ມີສິດໄດ້ຮັບຂໍ້ມູນຂ່າວສານຈາກພັກ-ລັດທຸກຂັ້ນ.
- ຮັບລາຍງານຂໍ້ມູນຂ່າວສານວຽກງານຕ່າງໆຈາກແນວລາວສ້າງຊາດຂັ້ນລຸ່ມຖັດ.
- ເຂົ້າຮ່ວມກອງປະຊຸມຂອງພັກ, ລັດ ແລະ ອົງການ ຕ່າງໆຕາມຂັ້ນ ຂອງຕົນ.
- ສ່ອງແສງລາຍງານສະພາບການຕ່າງໆໃຫ້ຂັ້ນເທິງ ຂອງຕົນຕາມສາຍຕັ້ງ ແລະ ສາຍຂວາງ.
- ໄດ້ຮັບການບຳລຸງ ແລະ ກໍ່ສ້າງທາງດ້ານທິດສະດີການເມືອງ ແລະ ວິຊາສະເພາະ.
- ໄດ້ຮັບຜົນປະໂຫຍດ ແລະ ນະໂຍບາຍຕ່າງໆທີ່ຖືກຕ້ອງຕາມກົດໝາຍ.
- ມີສິດຄຸ້ມຄອງສຳນັກງານ, ຫ້ອງການ, ພະນັກງານ- ລັດຖະກອນ, ວັດຖຸພາຫະນະ, ງົບປະມານ ແລະ ກອງທຶນ ຂອງແນວລາວສ້າງຊາດ.
- ມີສິດເຄື່ອນໄຫວວຽກງານການຕ່າງປະເທດ ຕາມແນວທາງຂອງພັກ, ນະໂຍບາຍ ແລະ ກົດໝາຍ ຂອງລັດ.

**ມາດຕາ 4. ສາຍໃຍການຈັດຕັ້ງ ຂອງແນວລາວສ້າງຊາດ.**

ການຈັດຕັ້ງຂອງອົງການແນວລາວສ້າງຊາດມີ 4 ຂັ້ນ ຄື:

1. ຂັ້ນສູນກາງ (ເອີ້ນວ່າ ສູນກາງແນວລາວສ້າງຊາດ)
2. ຂັ້ນແຂວງ-ນະຄອນຫຼວງ (ເອີ້ນວ່າ ແນວລາວສ້າງ ຊາດແຂວງ-ນະຄອນຫຼວງ)
3. ຂັ້ນເມືອງ-ເທດສະບານ (ເອີ້ນວ່າ ແນວລາວສ້າງຊາດເມືອງ-ເທດສະບານ)
4. ຂັ້ນບ້ານ (ເອີ້ນວ່າ ແນວລາວສ້າງຊາດບ້ານ)

**ມາດຕາ 5. ກອງປະຊຸມໃຫຍ່ ຂອງແນວລາວສ້າງຊາດ.**

1. ກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດ ແຕ່ລະຂັ້ນ 5 ປີໃດ ແມ່ນດຳເນີນໜຶ່ງຄັ້ງ; ກອງປະຊຸມໃຫຍ່ ຂອງແນວລາວສ້າງຊາດຂັ້ນໃດ ແມ່ນຄະນະກຳມະການແນວລາວສ້າງຊາດຂັ້ນນັ້ນເປັນຜູ້ຮຽກໂຮມພາຍໃຕ້ການຊີ້ນຳ ຂອງຄະນະເລຂາທິການສູນກາງພັກ (ສຳລັບຂັ້ນສູນກາງ) ແລະ ຂັ້ນທ້ອງຖິ່ນແມ່ນພາຍໃຕ້ການຊີ້ນຳ ຂອງຄະນະປະຈຳພັກຂັ້ນນັ້ນ.

2. ຈຳນວນພາກສ່ວນ, ອັດຕາສ່ວນຜູ້ແທນທີ່ເຂົ້າຮ່ວມກອງປະຊຸມໃຫຍ່ແນວລາວສ້າງຊາດທົ່ວປະ

ເທດແມ່ນກອງປະຊຸມຄະນະກຳມະການສູນກາງແນວລາວສ້າງຊາດປຶກສາຫາລື ແລະ ຕົກລົງ. ສ່ວນຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ແນວລາວສ້າງຊາດ ຂັ້ນແຂວງ-ນະຄອນຫຼວງ, ເມືອງ-ເທດສະບານ ແລະ ບ້ານ ແມ່ນກອງປະຊຸມຄະນະກຳມະການແນວລາວສ້າງຊາດຂັ້ນນັ້ນ ປຶກສາຫາລື-ຕົກລົງບົນພື້ນຖານການຊີ້ນຳຈາກຄະນະປະຈຳພັກໃນຂັ້ນດຽວກັນ ແລະ ການແນະນຳ ຂອງຂັ້ນເທິງຖັດ.

3. ຜູ້ແທນກອງປະຊຸມໃຫຍ່ທົ່ວປະເທດແນວລາວສ້າງຊາດ ມີໜ້າທີ່ດັ່ງນີ້:

(1) ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານການເມືອງ ຂອງຕົນ.

(2) ຄົ້ນຄວ້າ ແລະ ຮັບຮອງກົດລະບຽບສະບັບປັບປຸງ ຂອງຕົນສະໄໝນັ້ນ. (ສຳລັບຂັ້ນສູນກາງ).

(3) ປຶກສາຫາລືຢ່າງມີປະຊາທິປະໄຕ ເພື່ອສະເໜີ ແລະ ຮັບຮອງເອົາການແຕ່ງຕັ້ງຄະນະກຳມະການແນວລາວສ້າງຊາດຊຸດໃໝ່.

(4) ລົງປະຊາມະຕິຮັບຮອງເອົາມະຕິກອງປະຊຸມໃຫຍ່.

(5) ຄະນະກຳມະການຊຸດໃໝ່ມີໜ້າທີ່ເປີດກອງປະຊຸມຄັ້ງປະຖົມມະລືກ ເພື່ອແຕ່ງຕັ້ງປະທານ, ບັນດາຮອງປະທານ ແລະ ຄະນະປະຈຳ ຂອງສະໄໝນັ້ນ.

4 ຜູ້ແທນກອງປະຊຸມໃຫຍ່ແນວລາວສ້າງຊາດຢູ່ທ້ອງຖິ່ນມີໜ້າທີ່ດັ່ງນີ້:

(1) ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານການເມືອງ ຂອງຄະນະກຳມະການແນວລາວສ້າງຊາດຂັ້ນ ຂອງຕົນ.

(2) ປຶກສາຫາລືຢ່າງມີປະຊາທິປະໄຕ ເພື່ອສະເໜີ ແລະ ຮັບຮອງເອົາການແຕ່ງຕັ້ງຄະນະກຳມະການແນວລາວສ້າງຊາດຊຸດໃໝ່.

(3) ລົງປະຊາມະຕິຮັບຮອງເອົາມະຕິກອງປະຊຸມໃຫຍ່ ຂອງຕົນ.

(4) ຄະນະກຳມະການຊຸດໃໝ່ ມີໜ້າທີ່ເປີດກອງປະຊຸມຄັ້ງປະຖົມມະລືກ ເພື່ອແຕ່ງຕັ້ງປະທານ, ບັນດາຮອງປະທານ ແລະ ຄະນະປະຈຳ ຂອງສະໄໝນັ້ນ.

5 ຂັ້ນຕອນພິຈາລະນາ ແລະ ຮັບຮອງເອົາຄະນະກຳມະການແນວລາວສ້າງຊາດ ໃຫ້ດຳເນີນຕາມຂໍ້ 3; ມາດຕາ 21, ໝວດທີ V ຂອງກົດໝາຍວ່າດ້ວຍ ແນວລາວສ້າງຊາດ.

**ມາດຕາ 6. ຄະນະກຳມະການແນວລາວສ້າງຊາດ.**

1. ຄະນະກຳມະການແນວລາວສ້າງຊາດຢູ່ແຕ່ລະຂັ້ນ ແມ່ນອົງການປະຕິບັດວຽກງານ ລະຫວ່າງສອງສະໄໝກອງປະຊຸມໃຫຍ່ແນວລາວສ້າງຊາດ ຂອງຕົນ.

2. ຈຳນວນກຳມະການແນວລາວສ້າງຊາດຂັ້ນໃດ ແມ່ນກອງປະຊຸມໃຫຍ່ແນວລາວສ້າງຊາດຂັ້ນນັ້ນປຶກສາຫາລື ແລະ ເຫັນດີເຫັນພ້ອມ ໂດຍແມ່ນຄະນະປະຈຳພັກຂັ້ນນັ້ນ ເປັນຜູ້ຮັບຮອງຕາມການສະເໜີຂອງແນວລາວສ້າງຊາດຂັ້ນນັ້ນ.

3. ກຳມະການແນວລາວສ້າງຊາດຢູ່ແຕ່ລະຂັ້ນ ຈະສິ້ນສຸດການເປັນກຳມະການແນວລາວສ້າງຊາດ

ໃນກໍລະນີດັ່ງລຸ່ມນີ້:

(1) ກຳມະການແນວລາວສ້າງຊາດ ຜູ້ທີ່ຖືກສານຕັດສິນລົງໂທດ ຕັດອິດສະລະພາບ, ເສຍຊີວິດ ແລະ ຂໍລາອອກຈາກກຳມະການແນວລາວສ້າງຊາດ (ສຳລັບຂັ້ນສູນກາງ).

(2) ກຳມະການແນວລາວສ້າງຊາດ ຜູ້ທີ່ຖືກສານຕັດສິນລົງໂທດ ຕັດອິດສະລະພາບ, ເສຍຊີວິດ, ຂໍລາອອກ ແລະ ຍົກຍ້າຍໄປຢູ່ຕ່າງແຂວງ, ເມືອງ ແລະ ບ້ານ (ສຳລັບຂັ້ນທ້ອງຖິ່ນ).

(3) ການສະເໜີຮັບຮອງເອົາຜູ້ມາປ່ຽນນັ້ນ ແມ່ນຄະນະກຳມະການແນວລາວສ້າງຊາດໃນຂັ້ນດຽວກັນ ເປັນຜູ້ພິຈາລະນາ ແລະ ຕົກລົງເອົາຕາມການສະເໜີຈາກຂັ້ນລຸ່ມຖັດ.

(4) ໃນລະຫວ່າງສອງສະໄໝກອງປະຊຸມໃຫຍ່ ເມື່ອມີຄວາມຈຳເປັນ ແນວລາວສ້າງຊາດແຕ່ລະຂັ້ນມີສິດສະເໜີແຕ່ງຕັ້ງກຳມະການແນວລາວສ້າງຊາດເພີ່ມຕື່ມຈຳນວນໜຶ່ງ, ແຕ່ບໍ່ໃຫ້ກາຍໜຶ່ງສ່ວນສາມຂອງຈຳນວນທີ່ມີແລ້ວ.

**ມາດຕາ 7. ການແຕ່ງຕັ້ງຕຳແໜ່ງຕ່າງໆ ຂອງຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ.**

ການລົງມະຕິແຕ່ງຕັ້ງບັນດາຕຳແໜ່ງ ຂອງຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ຈະໄດ້ດຳເນີນຕາມມາດຕາ 14, 16, 17 ແລະ ມາດຕາ 20 ຂອງກົດລະບຽບສະບັບນີ້ ບົນຫຼັກການປຶກສາຫາລືຢ່າງມີປະຊາທິປະໄຕ.

**ມາດຕາ 8. ການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ ຂອງແນວລາວສ້າງຊາດ.**

1. ອີງໃສ່ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ທີ່ໄດ້ກຳນົດຢູ່ໃນກົດໝາຍ ວ່າດ້ວຍແນວລາວສ້າງຊາດ ແລະ ນິຕິກຳທີ່ກ່ຽວຂ້ອງ ພາຍຫຼັງຄະນະກຳມະການສູນກາງແນວລາວສ້າງຊາດໄດ້ຕົກລົງເປັນເອກະພາບກັບພາກສ່ວນທີ່ມີສິດຕັດສິນ, ສູນກາງຈະໄດ້ກຳນົດກ່ຽວກັບການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ ຂອງສູນກາງແນວລາວສ້າງຊາດ;

2. ຄະນະກຳມະການແນວລາວສ້າງຊາດ ແຕ່ລະຂັ້ນມີໜ້າທີ່ກໍ່ສ້າງ, ບຳລຸງຍົກລະດັບຄວາມຮູ້, ຄວາມສາມາດ, ຄຸນທາດການເມືອງໃຫ້ແກ່ພະນັກງານ-ລັດຖະກອນ ຂອງຕົນຢູ່ພາຍໃນ ແລະ ຕ່າງປະເທດ ຕາມແຜນກຳນົດສ້າງພະນັກງານແຕ່ລະໄລຍະຕາມຄວາມເໝາະສົມ.

3 ກາງສະໄໝກອງປະຊຸມໃຫຍ່ ຫາກມີການປ່ຽນແປງປະທານ, ຮອງປະທານນັ້ນ ຄະນະກຳມະການແນວລາວສ້າງຊາດຂັ້ນນັ້ນ ຈະຕ້ອງລາຍງານໃຫ້ຄະນະກຳມະການແນວລາວສ້າງຊາດຂັ້ນເທິງຖັດຊຶ່ງການເພີ່ມຕື່ມ ແລະ ຮັບຮອງກຳມະການແນວລາວສ້າງຊາດ ຕ້ອງໄດ້ດຳເນີນຕາມມາດຕາ 16 ຂອງກົດລະບຽບສະບັບນີ້.

**ມາດຕາ 9. ການຈັດຕັ້ງທີ່ປຶກສາ ແລະ ຜູ້ຮ່ວມງານ.**

1. ຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ສາມາດຈັດຕັ້ງຄະນະທີ່ປຶກສາ ຂອງຕົນເພື່ອ

ຊ່ວຍແກ້ໄຂວຽກງານແນວລາວສ້າງຊາດໃຫ້ມີປະສິດທິຜົນສູງຂຶ້ນ.

2. ຄະນະທີ່ປຶກສາຈະເປັນການຈັດຕັ້ງ ຫຼື ນິຕິບຸກຄົນ ຊຶ່ງປະກອບດ້ວຍກຳມະການແນວລາວສ້າງຊາດຜູ້ທີ່ເປັນຊ່ຽວຊານດ້ານວຽກງານໃດໜຶ່ງ ທີ່ພົວພັນເຖິງບົດບາດ ແລະ ໜ້າທີ່ ຂອງແນວລາວສ້າງຊາດທີ່ບໍ່ປະຈຳການ.

3. ຄະນະປະຈຳ ຂອງຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ເປັນຜູ້ຄົ້ນຄວ້າ ແລະ ແຕ່ງຕັ້ງທີ່ປຶກສາ ແລະ ຜູ້ຮ່ວມງານ, ທັງອອກຂໍ້ກຳນົດແນະນຳການເຄື່ອນໄຫວຕົວຈິງ.

## ໝວດທີ II

## ພາຄີ ຂອງແນວລາວສ້າງຊາດ

**ມາດຕາ 10. ນິຍາມ.** ພາຄີ ຂອງແນວລາວສ້າງຊາດ ແມ່ນອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ , ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນໃຫ້ແກ່ຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ-ໄວ ລວມທັງຕົວແທນຊາວລາວທີ່ອາໄສຢູ່ຕ່າງປະເທດ ຊຶ່ງເປັນເຊື້ອສາຍລາວທີ່ເຫັນດີເຫັນພ້ອມຕາມກົດລະບຽບ ແລະ ກົດໝາຍ ຂອງແນວລາວສ້າງຊາດ ຊຶ່ງຕ້ອງໄດ້ຮັບຮອງເອົາໃນກອງປະຊຸມໃຫຍ່ ຫຼື ກອງປະຊຸມຄົບຄະນະປະຈຳປີ. ພາຄີ ຂອງແນວລາວສ້າງຊາດ ບໍ່ແມ່ນສະມາຊິກຂຶ້ນກັບແຕ່ແມ່ນອົງການທີ່ພົວພັນກັນຢ່າງສະເໝີພາບ.

**ມາດຕາ 11. ເງື່ອນໄຂ ຂອງການເຂົ້າເປັນພາຄີ.**

1. ມີນ້ຳໃຈຮັກຊາດ, ມີຄວາມກ້າວໜ້າ, ມີບົດບາດອິດທິພົນ, ມີຄວາມເຊື່ອຖືຢູ່ໃນອົງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນຮາກຖານ.

2. ມີຄວາມຕື່ນຕົວ, ສະໝັກໃຈ ບົນພື້ນຖານການເຫັນດີເຫັນພ້ອມ ຂອງຄະນະກຳມະການແນວລາວສ້າງຊາດຂັ້ນນັ້ນ.

3. ມີຄວາມສາມາດເຕົ້າໂຮມຄວາມສາມັກຄີປອງດອງຢ່າງກວ້າງຂວາງ.

4. ປະຕິບັດກົດລະບຽບ ແລະ ກົດໝາຍ ຂອງແນວລາວສ້າງຊາດຢ່າງເຂັ້ມງວດ.

**ມາດຕາ 12. ໜ້າທີ່ ຂອງພາຄີ.**

1. ສະໜັບສະໜູນໃນການປະຕິບັດກົດລະບຽບ, ກົດໝາຍ ແລະ ແຜນປະຕິບັດງານ ຂອງແນວລາວສ້າງຊາດ ຫຼື ລາຍງານຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ທີ່ສ່ອງແສງຄວາມມຸ້ງມາດປາຖະໜາຂອງປະຊາຊົນໃຫ້ແກ່ຄະນະກຳມະການແນວລາວສ້າງຊາດ ໂດຍຜ່ານຫ້ອງການ ຫຼື ຄະນະນຳ ຂອງອົງການແນວລາວສ້າງຊາດໃນຂັ້ນ ຂອງຕົນ.

2. ເຂົ້າຮ່ວມໃນການໂຄສະນາ, ປຸກລະດົມປະຊາຊົນລາວບັນດາເຜົ່າ ໃຫ້ປະຕິບັດລັດຖະທຳມະນູນ

ແລະ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ແລະ ບັນດາແຜນງານ-ໂຄງການ ຂອງແນວລາວສ້າງຊາດ.

3. ສາມັກຄີ-ຮ່ວມມື ແລະ ຊ່ວຍເຫຼືອບັນດາອົງການຈັດຕັ້ງ ແລະ ບຸກຄົນທີ່ບໍ່ທັນເຂົ້າເປັນພາຄີ ຂອງແນວລາວສ້າງຊາດ ແຕ່ມີຄວາມປາຖະໜາຢາກຕໍ່ສູ້ເພື່ອເຮັດໃຫ້ປະເທດຊາດມີສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນະຖາວອນ.

4. ສະເໜີບັນດາອົງການຈັດຕັ້ງທີ່ນອນຢູ່ໃນການຈັດຕັ້ງ ຂອງແຕ່ລະພາຄີໃຫ້ປະຕິບັດນະໂຍບາຍສາມັກຄີທົ່ວປວງຊົນ ແລະ ເຂົ້າຮ່ວມວຽກງານແນວລາວສ້າງຊາດຢູ່ຮາກຖານ.

**ມາດຕາ 13. ສິດ ຂອງພາຄີ.**

1. ປຶກສາຫາລືວຽກງານ, ສະເໜີຖາມ, ຕຳນິສິ່ງຂ່າວ, ສະເໜີຄຳຄິດ ຄຳເຫັນ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວລາວສ້າງຊາດ.

2. ມີສິດສະເໜີຂໍໃຫ້ຄະນະກຳມະການແນວລາວສ້າງຊາດໃນຂັ້ນດຽວກັນ ເພື່ອປະສານສົມທົບຈັດຕັ້ງເຄື່ອນໄຫວ ລະຫວ່າງ ອົງການພາຄີທີ່ກ່ຽວຂ້ອງ ແນໃສ່ສະໜັບສະໜູນທົ່ວຄິດປະດິດສ້າງ ຂອງຕົນໃນການປຸກລະດົມປະຊາຊົນໃຫ້ປະຕິບັດວຽກງານແນວລາວສ້າງຊາດ.

3. ເຂົ້າຮ່ວມການກໍ່ສ້າງແຜນນະໂຍບາຍ ຂອງພັກ ແລະ ກົດໝາຍ ຂອງລັດ.

4. ຮ້ອງຂໍໃຫ້ຄະນະກຳມະການແນວລາວສ້າງຊາດ ເຂົ້າຮ່ວມການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຕົນ.

5. ສະເໜີເອົາຕົວແທນອົງການຈັດຕັ້ງ ຂອງຕົນເຂົ້າຮັບການແຕ່ງຕັ້ງເປັນກຳມະການແນວລາວສ້າງຊາດຂັ້ນດຽວກັນ.

6. ມີສິດໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການເຄື່ອນໄຫວ ຂອງແນວລາວສ້າງຊາດຂັ້ນ ຂອງຕົນ ແລະ ເຂົ້າຮ່ວມກອງປະຊຸມ ຂອງແນວລາວສ້າງຊາດໃນຂັ້ນດຽວກັນ.

## ໝວດທີ III

## ຄະນະກຳມະການສູນກາງແນວລາວສ້າງຊາດ

**ມາດຕາ 14. ການຈັດຕັ້ງ ແລະ ບຸກຄະລາກອນ ຂອງແນວລາວສ້າງຊາດ.**

ຄະນະກຳມະການສູນກາງແນວລາວສ້າງຊາດ (ເອີ້ນຫຍໍ້ວ່າ ຄກ ສນຊ) ໂດຍແມ່ນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ປຶກສາຫາລືເພື່ອຮັບຮອງ ແລະ ແຕ່ງຕັ້ງ ຊຶ່ງປະກອບດ້ວຍ:

(1) ປະທານ ຫຼື ຫົວໜ້າ ຂອງອົງການຈັດຕັ້ງພາຄີໃນຂັ້ນດຽວກັນ. ໃນກໍລະນີພິເສດ ຈຶ່ງໃຫ້ອົງການຈັດຕັ້ງພາຄີແຕ່ງຕັ້ງຕົວແທນໃນຄະນະນຳແທນຫົວໜ້າ.

(2) ບຸກຄົນທີ່ເປັນຕົວແທນໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ-ໄວ ລວມທັງຕົວແທນຄົນເຊື້ອສາຍລາວທີ່ອາໄສຢູ່ຕ່າງປະເທດ.

(3) ຫົວໜ້າຫ້ອງການ ແລະ ຫົວໜ້າກົມຢູ່ສູນກາງແນວລາວສ້າງຊາດ.

**ມາດຕາ 15. ໜ້າທີ່ ແລະ ຂອບເຂດສິດ ຂອງຄະນະກຳມະການສູນກາງແນວລາວສ້າງຊາດ.**

(1) ປຶກສາຫາລືເປັນເອກະພາບໃນການເຄື່ອນໄຫວ ເພື່ອປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດວາງອອກ.

(2) ປຶກສາຫາລືຢ່າງມີປະຊາທິປະໄຕ ເພື່ອສະເໜີແຕ່ງຕັ້ງ ແລະ ລົງປະຊາມະຕິຮັບຮອງເອົາປະທານ, ບັນດາຮອງປະທານ; ລົງປະຊາມະຕິຮັບຮອງການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງປະທານ, ຮອງປະທານ ແລະ ກຳມະການແນວລາວສ້າງຊາດຂັ້ນຕົ້ນ.

(3) ພິຈາລະນາ ແລະ ຕົກລົງຮັບຮອງເອົາອົງການຈັດຕັ້ງເຂົ້າມາເປັນພາຄີ ຂອງແນວລາວສ້າງຊາດຂັ້ນຕົ້ນ.

(4) ປະກອບຄຳເຫັນ, ສະເໜີໃຫ້ແກ່ພັກ-ລັດ ກ່ຽວກັບບັນດາແນວທາງນະໂຍບາຍ, ລະບຽບກົດໝາຍ ແລະ ນິຕິກຳທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນບັນດາເຜົ່າ; ຕິດຕາມ-ກວດກາການເຄື່ອນໄຫວ ຂອງບັນດາອົງການອຳນາດລັດ ແລະ ພະນັກງານ-ລັດຖະກອນ; ທະຫານ-ຕຳຫຼວດໃນການປະຕິບັດໜ້າທີ່.

(5) ຕົກລົງແຜນການ ກ່ຽວກັບການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຂອງແນວລາວສ້າງຊາດ ໃນສະໄໝທີ່ຈະມາເຖິງ.

**ມາດຕາ 16. ປະທານ, ຮອງປະທານ ເປັນຜູ້ຕາງໜ້າໃຫ້ຄະນະກຳມະການແນວລາວສ້າງຊາດ ລະຫວ່າງສອງສະໄໝກອງປະຊຸມໃຫຍ່ ຊຶ່ງມີໜ້າທີ່ ແລະ ສິດ ດັ່ງນີ້:**

1. ໜ້າທີ່ ແລະ ສິດ ຂອງປະທານ.

- ຕົກລົງບັນດາແຜນນະໂຍບາຍ, ຊີ້ນຳການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ທິດທາງໜ້າທີ່ຂອງກອງປະຊຸມໃຫຍ່ທີ່ໄດ້ວາງອອກ.

- ປະກອບຄຳຄິດ ຄຳເຫັນ ແລະ ສະເໜີບັນຫາຕ່າງໆຕໍ່ພັກ ແລະ ລັດ ກ່ຽວກັບແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ກົດໝາຍ ແລະ ມະຕິ, ຄຳສັ່ງທີ່ພົວພັນເຖິງສິດຜົນປະໂຫຍດ ແລະ ພັນທະຂອງພົນລະເມືອງ.

- ຊີ້ນຳການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ຂອງຄະນະກຳມະການສູນກາງແນວລາວສ້າງຊາດ, ມະຕິ ຂອງກອງປະຊຸມໃຫຍ່, ກອງປະຊຸມສາມັນ, ວິສາມັນ.

- ຈັດຕັ້ງປະຕິບັດ, ຜັນຂະຫຍາຍບັນດາແນວທາງນະໂຍບາຍ ຂອງພັກ ແລະ ກົດໝາຍ ຂອງລັດທີ່ພົວພັນເຖິງໜ້າທີ່, ຂອບເຂດສິດ ຂອງແນວລາວສ້າງຊາດ.

2. ບັນດາຮອງປະທານມີໜ້າທີ່ ແລະ ສິດຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍ ຂອງປະທານ.

3. ຖ້າມີຄວາມຈຳເປັນອາດຈະແຕ່ງຕັ້ງ ແລະ ຮັບຮອງເອົາຮອງປະທານທີ່ບໍ່ປະຈຳການຈຳນວນໜຶ່ງ.

**ມາດຕາ 17. ຄະນະປະຈຳ ຂອງຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ.**

1. ຄະນະປະຈຳ ຂອງຄະນະກຳມະການແນວລາວສ້າງຊາດ ແມ່ນການຈັດຕັ້ງທີ່ປະຈຳການ ຂອງແນວລາວສ້າງຊາດ ຊຶ່ງເຮັດບົດບາດປະຕິບັດໜ້າທີ່ແທນຄະນະກຳມະການແນວລາວສ້າງຊາດ ໃນໄລຍະທີ່ບໍ່ເປີດກອງປະຊຸມສະໄໝສາມັນປະຈຳປີ.

2. ຄະນະປະຈຳ ຂອງຄະນະກຳມະການແນວລາວສ້າງຊາດ ໂດຍແມ່ນຄະນະກຳມະການແນວລາວສ້າງຊາດຂັ້ນນັ້ນປຶກສາຫາລື ແລະ ສະເໜີແຕ່ງຕັ້ງ ຕາມຄວາມເໝາະສົມ, ລວມມີປະທານ, ບັນດາຮອງປະທານ ແລະ ກຳມະການແນວລາວສ້າງຊາດຂັ້ນນັ້ນ ທີ່ປະຈຳການຈຳນວນໜຶ່ງ.

3. ແບບແຜນວິທີເຮັດວຽກ ແລະ ການແບ່ງຄວາມຮັບຜິດຊອບ ຂອງຄະນະປະຈຳແຕ່ລະທ່ານ ແມ່ນຈະມີຂໍ້ຕົກລົງສະເພາະ.

**ມາດຕາ 18. ໜ້າທີ່ ແລະ ສິດ ຂອງຄະນະປະຈຳ.**

1. ຄົ້ນຄວ້າການສ້າງ ແລະ ປັບປຸງກົດລະບຽບ, ກົດໝາຍ ແລະ ນິຕິກຳຕ່າງໆທີ່ພົວພັນກັບວຽກງານແນວລາວສ້າງຊາດ ເພື່ອສະເໜີໃຫ້ກົມການເມືອງ, ຄະນະເລຂາທິການ, ສະພາແຫ່ງຊາດ ແລະ ກອງປະຊຸມສາມັນຄົບຄະນະພິຈາລະນາຕົກລົງ.

2. ຊີ້ນຳການຈັດຕັ້ງເຜີຍແຜ່ ແລະ ເຊື່ອມຊຶມຜົນສຳເລັດຂອງກອງປະຊຸມໃຫຍ່, ກົດລະບຽບ, ແຜນງານ-ໂຄງການ ແລະ ມະຕິຄຳສັ່ງຕ່າງໆໃຫ້ກວ້າງຂວາງ, ທົ່ວເຖິງ ພ້ອມທັງແນະນຳການຈັດຕັ້ງປະຕິບັດ.

3. ປະສານສົມທົບ ແລະ ປຶກສາຫາລືກ່ຽວກັບວຽກງານແນວລາວສ້າງຊາດ ກັບອົງການຈັດຕັ້ງພັກ-ລັດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນພາຄີ ຂອງແນວລາວສ້າງຊາດ ເພື່ອປະຕິບັດແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດໃຫ້ປະກົດຜົນເປັນຈິງ.

4. ປະກອບຄຳເຫັນ, ສະເໜີບັນຫາຕ່າງໆ ກ່ຽວກັບແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າ.

5. ຮຽກໂຮມ ແລະ ນຳພາດຳເນີນກອງປະຊຸມໃຫຍ່, ກອງປະຊຸມສາມັນ, ວິສາມັນ, ກອງປະຊຸມຄະນະປະຈຳ ແລະ ກອງປະຊຸມຮັບການລາຍງານສ່ອງແສງ ຂອງບັນດາພາຄີ.

6. ຊຸກຍູ້, ຕິດຕາມ-ກວດກາການເຄື່ອນໄຫວ ຂອງແນວລາວສ້າງຊາດຂັ້ນສູນກາງ ແລະ ທ້ອງຖິ່ນ.

7. ຕິດຕາມ ແລະ ສັງລວມຂໍ້ມູນຂ່າວສານຕ່າງໆຈາກອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ, ນັບທັງຄົນເຊື້ອສາຍລາວທີ່ດຳລົງຊີວິດຢູ່ຕ່າງປະເທດ.

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ສາກົນ ຕາມຂອບເຂດຄວາມຮັບຜິດຊອບ ແລະ ລະບຽບກົດໝາຍ.

9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ຂອງຕົນ ແລະ ຂໍທິດຊີ້ນຳຈາກປະທານ ແລະ ຕໍ່ຂັ້ນເທິງ.

## ໝວດທີ IV
## ຄະນະກຳມະການແນວລາວສ້າງຊາດຂັ້ນທ້ອງຖິ່ນ

**ມາດຕາ 19. ການຈັດຕັ້ງ ແລະ ບຸກຄະລາກອນ ຂອງແນວລາວສ້າງຊາດແຂວງ, ນະຄອນຫຼວງ, ເມືອງ-ເທດສະບານ ແລະ ບ້ານ.**

1. ຄະນະກຳມະການແນວລາວສ້າງຊາດແຂວງ-ນະຄອນຫຼວງ, ເມືອງ-ເທດສະບານ ແລະ ບ້ານ ໂດຍແມ່ນຜູ້ແທນກອງປະຊຸມໃຫຍ່ແນວລາວສ້າງຊາດ ຂັ້ນນັ້ນເປັນຜູ້ປຶກສາຫາລືສະເໜີແຕ່ງຕັ້ງ ແລະ ລົງປະຊາມະຕິຮັບຮອງເອົາ, ແມ່ນອົງການປະຕິບັດວຽກງານ ລະຫວ່າງ ສອງສະໄໝກອງປະຊຸມໃຫຍ່ ຊຶ່ງປະກອບດ້ວຍ:

- ຫົວໜ້າຂອງບັນດາອົງການຈັດຕັ້ງພາຄີໃນຂັ້ນດຽວກັນ; ໃນກໍລະນີພິເສດອາດຈະເອົາຕົວແທນໃນຂັ້ນນຳ ຂອງອົງການພາຄີປະກອບເຂົ້າ.
- ປະທານຄະນະກຳມະການແນວລາວສ້າງຊາດຂັ້ນລຸ່ມຖັດ.
- ປະທານສະຫະພັນກຳມະບານສັງກັດຢູ່ໂຮງງານໃຫຍ່ ຂອງລັດ, ລັດວິສະຫະກິດ, ປະທານສະຫະພັນກຳມະບານໃນຂະແໜງສູນກາງທີ່ມີສຳນັກງານຕັ້ງຢູ່ໃນທ້ອງຖິ່ນ; ຕົວແທນການນຳ ຂອງອົງການຈັດຕັ້ງເສດຖະກິດລວມໝູ່ ແລະ ພາກສ່ວນເສດຖະກິດອື່ນຢູ່ໃນທ້ອງຖິ່ນ.
- ຜູ້ຊົງຄຸນວຸດທິ, ປັນຍາຊົນ, ບຸກຄົນທີ່ເປັນຕົວແທນໃນອົງການຈັດຕັ້ງສັງຄົມ, ບັນດາຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ-ໄວ.
- ຮອງປະທານຈຳນວນໜຶ່ງຢູ່ແນວລາວສ້າງຊາດ ຂັ້ນຕົນ.

2. ຄະນະກຳມະການແນວລາວສ້າງຊາດແຂວງ-ນະຄອນຫຼວງ ປະຊຸມຄົບຄະນະປີລະ 1 ຄັ້ງ; ເມືອງ-ເທດສະບານປະຊຸມປີລະ 1 ຄັ້ງ ແລະ ຂັ້ນບ້ານອີງໃສ່ຄວາມເໝາະສົມ ຂອງບ້ານ.

3. ປະທານ ຫຼື ຮອງປະທານ ເປັນປະທານກອງປະຊຸມແນວລາວສ້າງຊາດຂັ້ນຕົນ.

**ມາດຕາ 20. ໜ້າທີ່ ແລະ ສິດຂອງຄະນະກຳມະການ ແນວລາວສ້າງຊາດແຂວງ-ນະຄອນຫຼວງ.**

1. ຜັນຂະຫຍາຍມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງສູນກາງແນວລາວສ້າງຊາດ ແລະ ຂອງຕົນມາເປັນແຜນງານ, ໂຄງການ ແລະ ແຜນການເພື່ອຈັດຕັ້ງປະຕິບັດ.

2. ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ກົດລະບຽບ ແລະ ຄຳແນະນຳ ຂອງແນວລາວສ້າງຊາດໃນຄວາມຮັບຜິດຊອບຂອງຕົນ.

3. ແນະນຳ, ຕິດຕາມ-ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດແຜນງານ, ລະບຽບ-ກົດໝາຍກ່ຽວກັບແນວລາວສ້າງຊາດໃນຂອບເຂດແຂວງ-ນະຄອນຫຼວງ.

4. ປຸກລະດົມ, ເຕົ້າໂຮມ, ສຶກສາອົບຮົມປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ-ໄວໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອສາມັກຄີ ແລະ ເຂົ້າຮ່ວມປົກປັກຮັກສາ, ພັດທະນາປະເທດຊາດ ແລະ ທ້ອງຖິ່ນຂອງຕົນ.

5. ພິຈາລະນາການລົບລ້າງ ຫຼື ໂຈະການປະຕິບັດມະຕິ, ຄຳແນະນຳ, ແຈ້ງການ ແລະ ລະບຽບການຂອງແນວລາວສ້າງຊາດຂັ້ນລຸ່ມ ຫຼື ສະເໜີໃຫ້ພາກສ່ວນກ່ຽວຂ້ອງລົບລ້າງ ຫຼື ໂຈະການປະຕິບັດນິຕິກຳທີ່ເຫັນວ່າບໍ່ສອດຄ່ອງກັບລະບຽບ-ກົດໝາຍ ຫຼື ມະຕິຂອງຕົນ.

6. ພິຈາລະນາ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງພະນັກງານແນວລາວສ້າງຊາດຂັ້ນ ຂອງຕົນ, ການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກກົງຈັກຊ່ວຍວຽກຂັ້ນລຸ່ມຖັດ;

7. ຊອກລາຍຮັບດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

8. ພົວພັນ ແລະ ຮ່ວມມືກັບອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດຕາມການຕົກລົງເຫັນດີ ຫຼື ການມອບໝາຍຈາກຂັ້ນເທິງ ຂອງຕົນ.

9. ສະຫຼຸບ, ລາຍງານວຽກງານແນວລາວສ້າງຊາດ ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນຕໍ່ສູນກາງແນວລາວສ້າງຊາດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຂອງແຂວງ, ນະຄອນຫຼວງຢ່າງເປັນປົກກະຕິ.

10. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ ໃນລະບຽບ-ກົດໝາຍ.

**ມາດຕາ 21. ປະທານ, ຮອງປະທານຄະນະກຳມະການແນວລາວສ້າງຊາດ ແຂວງ- ນະຄອນຫຼວງ.**

ເຮັດວຽກຕາມລະບອບປຶກສາຫາລື ແລະ ຕົກລົງເປັນໝູ່ຄະນະ, ມອບໜ້າທີ່ໃຫ້ບຸກຄົນຮັບຜິດຊອບ, ປະຊຸມປຶກສາຫາລືວຽກງານເປັນເອກະພາບ ຊຶ່ງປະຊຸມເດືອນລະ 1 ເທື່ອ.

**ມາດຕາ 22. ໜ້າທີ່ ແລະ ສິດ ຂອງຄະນະກຳມະການແນວລາວສ້າງຊາດເມືອງ- ເທດສະບານ.**

1. ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ, ກອງປະຊຸມວິສາມັນ ຂອງແຂວງ-ນະຄອນຫຼວງ ແລະ ຂອງຕົນໃຫ້ປະກົດຜົນເປັນຈິງ.

2. ເຜີຍແຜ່ແນວທາງນະໂຍບາຍ ຂອງພັກ, ລະບຽບກົດ ໝາຍຂອງລັດ ແລະ ຄຳແນະນຳ ຂອງຂັ້ນເທິງຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

3. ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນງານ, ໂຄງການ ຂອງແນວລາວສ້າງຊາດໃນຂອບເຂດເມືອງ-ເທດສະບານທີ່ຕົນຮັບຜິດຊອບ.

4. ປຸກລະດົມ, ເຕົ້າໂຮມ, ສຶກສາອົບຮົມປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ-ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອສາມັກຄີ ແລະ ເຂົ້າຮ່ວມປົກປັກຮັກສາ, ພັດທະນາປະເທດຊາດ ແລະ ທ້ອງຖິ່ນຂອງຕົນ.

5. ພິຈາລະນາການລົບລ້າງ ຫຼື ໂຈະການປະຕິບັດມະຕິ, ຄໍາແນະນໍາ, ແຈ້ງການ ແລະ ລະບຽບການອື່ນໆ ຂອງແນວລາວສ້າງຊາດບ້ານ, ສະເໜີໃຫ້ພາກສ່ວນກ່ຽວຂ້ອງລົບລ້າງ ຫຼື ໂຈະການປະຕິບັດນິຕິກໍາທີ່ເຫັນວ່າບໍ່ສອດຄ່ອງກັບລະບຽບ-ກົດໝາຍ ຫຼື ມະຕິຂອງຕົນ.

6. ພິຈາລະນາ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງພະນັກງານແນວລາວສ້າງຊາດ ຂອງຕົນ, ການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກກົງຈັກຊ່ວຍວຽກ ຂອງຕົນ ແລະ ບ້ານ ເພື່ອສະເໜີພາກສ່ວນທີ່ກ່ຽວຂ້ອງພິຈາລະນາ.

7. ຊອກລາຍຮັບດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຂອງຕົນ.

8. ສະຫຼຸບ, ລາຍງານວຽກງານແນວລາວສ້າງຊາດ ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນຕໍ່ແນວລາວສ້າງຊາດແຂວງ, ນະຄອນຫຼວງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຂອງເມືອງ-ເທດສະບານຢ່າງເປັນປົກກະຕິ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ ໃນລະບຽບ ແລະ ກົດໝາຍ.

**ມາດຕາ 23. ໜ້າທີ່ ແລະ ສິດຂອງຄະນະກໍາມະການແນວລາວສ້າງຊາດ ບ້ານ.**

1. ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງເມືອງ-ເທດສະບານ ແລະ ຂອງຕົນໃຫ້ປະກົດຜົນເປັນຈິງ;

2. ເຜີຍແຜ່ແນວທາງນະໂຍບາຍ ຂອງພັກ, ກົດໝາຍ ຂອງລັດ, ກົດລະບຽບ, ແຜນງານ ແລະ ຄໍາແນະນໍາຈາກຂັ້ນເທິງຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງຕົນ;

3. ປຸກລະດົມ, ເຕົ້າໂຮມ, ສຶກສາອົບຮົມປະຊາຊົນ ລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ-ໄວໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອສາມັກຄີເພື່ອເຂົ້າຮ່ວມການປົກປັກຮັກສາ ແລະ ພັດທະນາບ້ານ ຂອງຕົນ;

4. ເຂົ້າຮ່ວມໃນການໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆພາຍໃນບ້ານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ຕິດຕາມ, ເກັບກໍາທາງສຽງຂອງປະຊາຊົນຕໍ່ການ ເຄື່ອນໄຫວວຽກງານຂອງຜູ້ແທນ, ອໍານາດການປົກຄອງ ເພື່ອສ່ອງແສງໃຫ້ອົງການທີ່ກ່ຽວຂ້ອງພິຈາລະນາແກ້ໄຂ;

6. ຊອກລາຍຮັບດ້ວຍຮູບການຕ່າງໆທີ່ຖືກຕ້ອງຕາມກົດໝາຍເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຂອງຕົນ;

7. ສະຫຼຸບ, ລາຍງານວຽກງານແນວລາວສ້າງຊາດໃນຂອບເຂດຄວາມຮັບຜິດຊອບ ຂອງຕົນຕໍ່ແນວລາວສ້າງຊາດເມືອງ-ເທດສະບານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຂອງບ້ານຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ-ກົດໝາຍ;

9. ພົວພັນ ແລະ ປະສານສົມທົບກັບການຈັດຕັ້ງພາຄີ ທີ່ມີຢູ່ພາຍໃນບ້ານ ເພື່ອພ້ອມກັນປົກປັກຮັກສາຄວາມສະຫງົບສຸກ, ຄວາມເປັນລະບຽບຮຽບຮ້ອຍ ແລະ ພ້ອມກັນສ້າງສາພັດທະນາບ້ານ ຂອງຕົນໃຫ້ບັນລຸຕາມແນວທາງຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃນແຕ່ລະໄລຍະ;

**ມາດຕາ 24. ໜ້າທີ່ ແລະ ຂອບເຂດສິດຂອງປະທານ ແລະ ຮອງປະທານຄະນະກຳມະການແນວລາວສ້າງຊາດບ້ານ.**

1. ປະທານ ແລະ ບັນດາຮອງປະທານ ຂອງຄະນະກຳມະການແນວລາວສ້າງຊາດບ້ານ ໂດຍແມ່ນຄະນະກຳມະການແນວລາວສ້າງຊາດບ້ານ ປຶກສາຫາລືເພື່ອສະເໜີແຕ່ງຕັ້ງຢ່າງມີປະຊາທິປະໄຕ ແລະ ລົງມະຕິຮັບຮອງເອົາ;

2. ປະທານ ແລະ ບັນດາຮອງປະທານແນວລາວສ້າງຊາດບ້ານມີໜ້າທີ່-ຂອບເຂດສິດດັ່ງລຸ່ມນີ້:

(1) ກະກຽມກອງປະຊຸມ, ດຳເນີນ ແລະ ຄວບຄຸມກອງປະຊຸມແຕ່ລະຄັ້ງ ຂອງກຳມະການແນວລາວສ້າງຊາດບ້ານ;

(2) ຈັດຕັ້ງການປະຕິບັດມະຕິ, ຂໍ້ຕົກລົງ, ແຜນການເຄື່ອນໄຫວໃນການປະສານສົມທົບ ແລະ ເປັນເອກະພາບປະຈຳປີ, ງວດ, 6 ເດືອນ ແລະ ປະຈຳເດືອນ ຂອງກຳມະການແນວລາວສ້າງຊາດ ແລະ ບັນດາແຜນນະໂຍບາຍຂອງຄະນະກຳມະການແນວລາວສ້າງຊາດຂັ້ນເທິງ; ແຜນນະໂຍບາຍ ຂອງພັກ, ນະໂຍບາຍ, ກົດໝາຍ ຂອງລັດ, ບັນດາມະຕິ, ຂໍ້ຕົກລົງ ຂອງອົງການປົກຄອງທີ່ພົວພັນເຖິງໜ້າທີ່ ແລະ ຂອບເຂດສິດ ຂອງຕົນ;

(3) ເກັບກຳ, ເຕົ້າໂຮມເອົາຄຳຄິດຄຳເຫັນ, ຂໍ້ສະເໜີຂອງປະຊາຊົນ ເພື່ອນຳສະເໜີຕໍ່ຂັ້ນເທິງຖັດຕົນຢ່າງເປັນປົກກະຕິ; ຕາງໜ້າໃຫ້ຄະນະກຳມະການແນວລາວສ້າງຊາດບ້ານ ເພື່ອປະກອບຄຳຄິດຄຳເຫັນກ່ຽວກັບການປະຕິບັດນະໂຍບາຍພັກ ແລະ ກົດໝາຍ ຂອງລັດ, ອຳນາດການປົກຄອງຂັ້ນຕົນ;

(4) ປຸກລະດົມປະຊາຊົນ ປະຕິບັດບັນດາຂະບວນການຈັດຕັ້ງແຂ່ງຂັນ, ບັນດາຂະບວນການກໍ່ສ້າງ ແລະ ປັບປຸງອົງການປົກຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ; ຕິດຕາມ-ກວດກາການເຄື່ອນໄຫວ ຂອງບັນດາອົງການອຳນາດລັດ, ສະມາຊິກສະພາແຫ່ງຊາດ, ສະພາທ້ອງຖິ່ນ ແລະ ພະນັກງານ-ລັດຖະກອນ ເພື່ອສ່ອງແສງຄືນໃຫ້ການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງພິຈາລະນາ, ເຂົ້າຮ່ວມການໄກ່ເກ່ຍແກ້ໄຂຄຳຮ້ອງທຸກຢູ່ທ້ອງຖິ່ນຮາກຖານ, ປຸກລະດົມຂົນຂວາຍ, ຊຸກຍູ້ ແລະ ນຳພາປະຊາຊົນສ້າງກອງທຶນພັດທະນາຂັ້ນບ້ານ;

(5) ຮັກສາສາຍພົວພັນປະສານສົມທົບວຽກງານກັບອົງການພາຄີ ແລະ ອົງການປົກຄອງໃນຂັ້ນດຽວ

ກັນໃຫ້ໜັກແໜ້ນ;

3. ປະທານ ແລະ ບັນດາຮອງປະທານ ຂອງຄະນະກຳມະການແນວລາວສ້າງຊາດບ້ານ ກອງປະຊຸມປົກກະຕິເດືອນລະ 1 ຄັ້ງ.

4. ບັນດາຮອງປະທານ ແມ່ນຜູ້ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານ ຊຶ່ງມີຄວາມຮັບຜິດຊອບວຽກງານດັ່ງກ່າວ ຕໍ່ຄະນະກຳມະການແນວລາວສ້າງຊາດ ແລະ ຄະນະພັກ-ອຳນາດການປົກຄອງເມືອງ-ເທດສະບານ.

## ໝວດທີ V
## ແບບແຜນວິທີເຮັດວຽກ ຂອງແນວລາວສ້າງຊາດ

**ມາດຕາ 25. ຫຼັກການເຮັດວຽກ ຂອງແນວລາວສ້າງຊາດ.**

- ປຶກສາຫາລືແບບປະຊາທິປະໄຕ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ.
- ສະໝັກໃຈ ແລະ ຕື່ນຕົວຕາມມາດຖານ-ເງື່ອນໄຂ.
- ປະສານສົມທົບກັບທຸກພາກສ່ວນທີ່ເປັນພາຄີ ຂອງຕົນ.
- ມີຂໍ້ກຳນົດ ແລະ ພາລະບົດບາດສະເພາະ ເພື່ອເຄື່ອນໄຫວວຽກງານແຕ່ລະດ້ານ.

**ມາດຕາ 26. ການພົວພັນ ຂອງແນວລາວສ້າງຊາດ.**

- ພົວພັນກັບອົງການພັກ ເພື່ອຂໍຄຳເຫັນຊີ້ນຳ ແລະ ປຶກສາຫາລື, ສົມທົບການເຮັດວຽກການເມືອງ-ແນວຄິດ, ການຈັດຕັ້ງ, ກໍ່ສ້າງພະນັກງານ ແລະ ການຕິດຕາມ- ກວດກາ.

- ພົວພັນກັບບັນດາອົງການອຳນາດລັດ, ອົງການປົກຄອງທຸກຂັ້ນ, ການຈັດຕັ້ງທາງສັງຄົມທັງພາຍໃນ, ຕ່າງປະເທດໃນການຄຸ້ມຄອງ ແລະ ປະຕິບັດນະໂຍບາຍຊົນເຜົ່າ, ສາສະໜາ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອຄວາມສາມັກຄີປອງດອງ.

- ພົວພັນກັບອົງການພາຄີ ເພື່ອຮ່ວມການເຄື່ອນໄຫວລວມ, ແຕ່ຍັງຮັກສາລັກສະນະເອກະລາດຂອງແຕ່ລະອົງການພາຄີ.

- ພົວພັນກັບຄະນະກຳມະການແນວລາວສ້າງຊາດ ແຕ່ລະຂັ້ນຕາມສາຍຕັ້ງ ເພື່ອຮັບສ່ອງແສງ, ໃຫ້ການຊີ້ນຳ ແລະ ປຶກສາຫາລືວຽກງານທີ່ກ່ຽວຂ້ອງ.

**ມາດຕາ 27. ແບບແຜນວິທີເຮັດວຽກ ຂອງແນວລາວສ້າງຊາດ.**

- ປະຕິບັດຫຼັກການເຮັດວຽກແບບໝູ່ຄະນະ, ແບ່ງວຽກໃຫ້ບຸກຄົນຮັບຜິດຊອບ ແລະ ປຶກສາຫາລືເປັນເອກະພາບ.

- ປະຕິບັດລະບອບແບບແຜນວິທີເຮັດວຽກຕາມແຜນການ, ມີແຜນງານ, ມີໂຄງການລະອຽດໃນແຕ່ລະເດືອນ, ງວດ, 1 ປີ ແລະ 5 ປີ.

- ປະຕິບັດການເຄື່ອນໄຫວຕາມມະຫາຊົນ ແລະ ລົງຮາກຖານກຳແໜ້ນປະຊາຊົນ.

**ມາດຕາ 28. ລະບອບປະຊຸມຂອງແນວລາວສ້າງຊາດ ແຕ່ລະຂັ້ນ.**

- ຄະນະກຳມະການແນວລາວສ້າງຊາດທຸກຂັ້ນປະຊຸມຄົບຄະນະປີລະ 1 ເທື່ອ ລະຫວ່າງ ເດືອນມັງກອນ ຫຼື ເດືອນກຸມພາ ຂອງທຸກໆປີ.

- ຄະນະປະຈຳສູນກາງແນວລາວສ້າງຊາດ ປະຊຸມເປີດກວ້າງປີລະ 1 ເທື່ອ ໃນລະຫວ່າງ ເດືອນສິງຫາ ຫຼື ເດືອນກັນຍາ ຂອງທຸກໆປີ.

- ຄະນະປະຈຳແນວລາວສ້າງຊາດແຕ່ລະຂັ້ນ ປະຊຸມປົກກະຕິເດືອນລະ 1 ເທື່ອ; ຖ້າມີວຽກຈຳເປັນກໍ່ອາດຮຽກປະຊຸມວິສາມັນໄດ້.

- ທຸກໆ 3 ເດືອນໃດ ຄະນະປະຈຳຮັບສ່ອງແສງຈາກບັນດາພາຄີ, ທີ່ປຶກສາ ແລະ ກຳມະການແນວລາວສ້າງຊາດອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.

## ໝວດທີ VI

## ວຽກງານຕິດຕາມ - ກວດກາ ຂອງແນວລາວສ້າງຊາດ

**ມາດຕາ 29. ອົງການກວດກາວຽກງານແນວລາວສ້າງຊາດ.**

ອົງການກວດກາວຽກງານແນວລາວສ້າງຊາດ ແມ່ນອົງການດຽວກັບອົງການຄຸ້ມຄອງວຽກງານແນວລາວສ້າງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍ ວ່າດ້ວຍແນວລາວສ້າງຊາດ ຊຶ່ງປະກອບດ້ວຍ 4 ຂັ້ນດັ່ງນີ້:

1. ສູນກາງແນວລາວສ້າງຊາດ;
2. ແນວລາວສ້າງຊາດແຂວງ-ນະຄອນຫຼວງ;
3. ແນວລາວສ້າງຊາດເມືອງ-ເທດສະບານ;
4. ແນວລາວສ້າງຊາດບ້ານ;

**ມາດຕາ 30. ໜ້າທີ່ ຂອງອົງການກວດກາວຽກງານແນວລາວສ້າງຊາດ.**

1. ກວດກາສະພາບການຈັດຕັ້ງປະຕິບັດກົດໝາຍ, ກົດລະບຽບ ແລະ ມະຕິກອງປະຊຸມແນວລາວສ້າງຊາດຂັ້ນຕົນ ແລະ ຂັ້ນລຸ່ມ;

2. ກວດກາການຄຸ້ມຄອງ, ນຳໃຊ້ ແລະ ປະຕິບັດນະໂຍບາຍ ຕໍ່ຄະນະກຳມະການແນວລາວສ້າງຊາດ, ພະນັກງານ ແລະ ລັດຖະກອນ ຂອງແນວລາວສ້າງຊາດ;

3. ກວດກາການຄຸ້ມຄອງ, ນຳໃຊ້ງົບປະມານ, ວັດຖຸ- ຊັບສິນ ຂອງແນວລາວສ້າງຊາດ;

4. ກວດກາການປົກປ້ອງສິດ ແລະ ຜົນປະໂຫຍດຂອງຄະນະກຳມະການແນວລາວສ້າງຊາດ, ພາຄີ, ພະນັກງານ-ລັດຖະກອນ ຂອງແນວລາວສ້າງຊາດ.

5. ເຂົ້າຮ່ວມຕິດຕາມ-ກວດກາການເຄື່ອນໄຫວ ຂອງບັນດາອົງການອຳນາດລັດທຸກຂັ້ນ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາທ້ອງຖິ່ນ, ສະມາຊິກພັກ, ພະນັກງານ-ລັດຖະກອນທົ່ວໄປ.

6. ຕິດຕາມ-ກວດກາການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ຕາມຄວາມຮັບຜິດຊອບ ຂອງຕົນ;

7. ສະເໜີນຳໃຊ້ວິທີການ ແລະ ມາດຕະການແກ້ໄຂຜົນ ຂອງການກວດກາ;

8. ປະຕິບັດສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍ;

**ມາດຕາ 31. ປະເພດ ແລະ ຮູບການກວດກາຂອງແນວລາວສ້າງຊາດ.**

ປະເພດ ແລະ ຮູບການກວດກາແມ່ນປະຕິບັດຕາມ ມາດຕາ 38 ແລະ ມາດຕາ 39 ຂອງກົດໝາຍ ວ່າດ້ວຍແນວລາວສ້າງຊາດ.

## ໝວດທີ VII

## ການຍ້ອງຍໍສັນລະເສີນ ແລະ ການປະຕິບັດວິໄນ

**ມາດຕາ 32. ການຍ້ອງຍໍ.**

ບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການປະຕິບັດພາລະກິດເຕົ້າໂຮມຄວາມສາມັກຄີປອງດອງທົ່ວປວງຊົນທັງຊາດໃຫ້ເປັນປຶກແຜ່ນແໜ້ນໜາ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍຕາມລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 33. ການປະຕິບັດວິໄນ.**

1. ອົງການຈັດຕັ້ງພາຄີໃດທີ່ຜິດຕໍ່ກົດລະບຽບ ຂອງແນວລາວສ້າງຊາດຈະຖືກຕຳນິ, ກ່າວເຕືອນ ຫຼື ບໍ່ຮັບເປັນພາຄີ ຂອງແນວລາວສ້າງຊາດ ຕາມສະຖານໜັກ ຫຼື ເບົາ.

2. ກຳມະການແນວລາວສ້າງຊາດ, ພະນັກງານ-ລັດຖະກອນ, ນິຕິບຸກຄົນທີ່ເປັນຕົວແທນໃຫ້ແກ່ຊົນເຜົ່າ, ສາສະໜາ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ມີການເຄື່ອນໄຫວຜິດຕໍ່ກົດລະບຽບ ຂອງແນວລາວສ້າງຊາດຈະຖືກຕຳນິ, ກ່າວເຕືອນ ຫຼື ຢຸດເຊົາໜ້າທີ່ວຽກງານຕາມຄວາມຜິດໃນສະຖານໜັກ ຫຼື ເບົາ ແລະ ຖືກດຳເນີນຄະດີຕາມກົດໝາຍ.

## ໝວດທີ VIII

## ການເງິນ ແລະ ຊັບສິນບັດ ຂອງແນວລາວສ້າງຊາດ

**ມາດຕາ 34. ການເງິນ ຂອງແນວລາວສ້າງຊາດ.**

1. ລາຍຮັບຈາກງົບປະມານ ຂອງລັດ;

2. ລາຍຮັບຈາກການເຄື່ອນໄຫວຫາລາຍໄດ້ທີ່ຖືກຕ້ອງຕາມກົດໝາຍ;

3. ຈາກການຊ່ວຍເຫຼືອ ຂອງການຈັດຕັ້ງ, ບຸກຄົນທັງພາຍໃນ ແລະ ຕ່າງປະເທດ;

4. ລາຍຮັບອື່ນໆ ທີ່ຖືກຕ້ອງຕາມກົດໝາຍ;

**ມາດຕາ 35. ການຄຸ້ມຄອງລາຍຮັບ ຂອງແນວລາວສ້າງຊາດ.**

ແນວລາວສ້າງຊາດແຕ່ລະຂັ້ນນຳໃຊ້ລາຍຮັບ ຂອງຕົນ ໂດຍປະຕິບັດລະບອບບັນຊີຕາມລະບຽບກົດໝາຍ ກ່ຽວກັບການເງິນ ແລະ ງົບປະມານຂອງລັດ.

1. ການເຄື່ອນໄຫວວຽກງານ ຫຼື ການຂະຫຍາຍກິດຈະການຕ່າງໆຕາມແຜນການ ຂອງແນວລາວສ້າງຊາດ;

2. ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງແນວລາວສ້າງຊາດ;

3. ການອຸປະຖຳ ແລະ ສະໜັບສະໜູນຈາກອົງການຈັດຕັ້ງ ຫຼື ພາກສ່ວນອື່ນໆຕາມເງື່ອນໄຂຕົວຈິງ;

4. ການປະຕິບັດນະໂຍບາຍຕ່າງໆ ແລະ ວຽກງານອື່ນໆ ຂອງແນວລາວສ້າງຊາດຕາມລະບຽບການຕໍ່ພະນັກງານ-ລັດຖະກອນ;

**ມາດຕາ 36. ຊັບສົມບັດ ຂອງແນວລາວສ້າງຊາດ.**

1. ຊັບສົມບັດຈາກການມອບໝາຍ ຂອງລັດ;

2. ຊັບສົມບັດຈາກການຈັດຕັ້ງ ຫຼື ບຸກຄົນຢູ່ພາຍໃນ ແລະ ຢູ່ຕ່າງປະເທດມອບໃຫ້ແນວລາວສ້າງຊາດ.

3. ຊັບສົມບັດທີ່ແນວລາວສ້າງຊາດສ້າງຕັ້ງຂຶ້ນເອງ ໂດຍຖືກຕ້ອງຕາມກົດໝາຍ.

4. ການຮັບເອົາ, ການຄຸ້ມຄອງ ແລະ ການນຳໃຊ້ຊັບສົມບັດດັ່ງກ່າວ ຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ລະບຽບກົດໝາຍ.

## ໝວດທີ IX

## ຕາປະທັບ, ກາໝາຍ ແລະ ທຸງ ຂອງແນວລາວສ້າງຊາດ

**ມາດຕາ 37. ຕາປະທັບ ຂອງແນວລາວສ້າງຊາດ.**

ແນວລາວສ້າງຊາດທຸກຂັ້ນ ລ້ວນແຕ່ມີຕາປະທັບ ຂອງຕົນເພື່ອພົວພັນວຽກງານທາງລັດຖະການ ໂດຍຖືກຕ້ອງຕາມກົດໝາຍ.

**ມາດຕາ 38. ກາໝາຍ ຂອງແນວລາວສ້າງຊາດ.**

ແນວລາວສ້າງຊາດ ມີກາໝາຍເປັນເອກະລັກ ຂອງຕົນຄື: ເປັນຮູບວົງມົນແບບດວງຈັນ, ມີທຸງຊາດລາວຕັ້ງຢູ່ດ້ານເທິງສຸດ, ຮູບທາດຫຼວງຕັ້ງຢູ່ທາງກາງ, ຮູບກົງຈັກເຄິ່ງວົງມົນຢູ່ກ້ອງທາດຫຼວງ, ຮູບຮວງເຂົ້າຢູ່ສອງຟາກຂ້າງ, ຮູບປຶ້ມຂຽນ ແລະ ປາກກາປັກນົກຢູ່ກ້ອງກົງຈັກດ້ານລຸ່ມ ຂອງຮວງເຂົ້າຊຶ່ງມີຕົວອັກສອນຂຽນວ່າ "ແນວລາວສ້າງຊາດ".

ກາໝາຍ ຂອງແນວລາວສ້າງຊາດ ແມ່ນສັນຍາລັກ ແຫ່ງຄວາມສາມັກຄີເປັນເອກະພາບໃນວົງຄະນາຍາດແຫ່ງຊາດ ບົນພື້ນຖານພັນທະພາບກຳມະກອນ, ຊາວກະສິກອນ ແລະ ຊັ້ນຄົນ, ນັກຮຽນຮູ້ປັນຍາຊົນ ໂດຍແມ່ນພັກປະຊາຊົນ ປະຕິວັດລາວເປັນແກນນຳ.

**ມາດຕາ 39. ທຸງ ຂອງແນວລາວສ້າງຊາດ.**

ທຸງ ຂອງແນວລາວສ້າງຊາດມີພື້ນເປັນສີແດງ, ມີຂະໜາດສ່ວນ 100x70 ຊມ ເສັ້ນຜ່າກາງຂອງກາໝາຍແນວລາວສ້າງຊາດ 60 ຊມ ກາໝາຍຈະຢູ່ຫ່າງຈາກເບື້ອງເທິງສຸດ ຂອງທຸງຕາມລວງຍາວ 10 (ຫົວໜ່ວຍວັດແທກແມ່ນ ຊັງຕີແມັດ).

**ມາດຕາມ 40.** ວັນສ້າງຕັ້ງແນວລາວສ້າງຊາດ ແມ່ນວັນທີ 13 ສິງຫາ 1950 ຊຶ່ງທຸກໆປີເປັນວັນບຸນມະຫາສາມັກຄີ ຂອງທົ່ວປວງຊົນລາວທັງຊາດ.

## ໝວດທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 41. ຜົນບັງຄັບໃຊ້ ຂອງກົດລະບຽບແນວລາວສ້າງຊາດ.**

ກົດລະບຽບໄດ້ຮັບຮອງຈາກກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ X ເຊິ່ງດຳເນີນຢູ່ນະຄອນຫຼວງວຽງຈັນ ແຕ່ວັນທີ 8-9/ 06/2016 ຊຶ່ງມີຜົນສັກສິດແຕ່ນີ້ເປັນຕົ້ນໄປ.

ບັນດາຂໍ້ກຳນົດ ກ່ຽວກັບແນວລາວສ້າງຊາດທີ່ຂັດກັບກົດລະບຽບສະບັບນີ້ ລ້ວນແຕ່ຖືກລົບລ້າງ, ກົດລະບຽບສະບັບນີ້ໄດ້ປ່ຽນແທນສະບັບກອງປະຊຸມໃຫຍ່ຄັ້ງທີ IX, ລົງວັນທີ 5-7 ກໍລະກົດ 2011.

**ມາດຕາ 42. ການປ່ຽນແປງກົດລະບຽບແນວລາວສ້າງຊາດ.**

ມີແຕ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຂອງແນວລາວສ້າງຊາດເທົ່ານັ້ນ ຈຶ່ງມີສິດປ່ຽນແປງກົດລະບຽບສະບັບນີ້.

**ມາດຕາ 43. ວ່າດ້ວຍການແນະນຳຈັດຕັ້ງປະຕິບັດ.**

ຄະນະປະຈຳ ຂອງຄະນະກຳມະການສູນກາງແນວລາວສ້າງຊາດ ມີໜ້າທີ່ແນະນຳການຈັດຕັ້ງປະຕິບັດກົດລະບຽບສະບັບນີ້, ແນວລາວສ້າງຊາດຂັ້ນທ້ອງຖິ່ນທຸກຂັ້ນ ມີສິດຈັດຕັ້ງເຜີຍແຜ່ຂະຫຍາຍກົດລະບຽບສະບັບນີ້ໃຫ້ທົ່ວເຖິງທຸກເປົ້າໝາຍ.

**ນະຄອນຫຼວງວຽງຈັນ, ວັນທີ 9 ມິຖຸນາ 2016.**

**ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ X ຂອງແນວລາວສ້າງຊາດ.**